ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ..02533..../ກພສ

ນະຄອນຫຼວງວຽງຈັນ, ວັນທີ.09...ມິຖຸນາ...2021

## ແຈ້ງການ

ເຖິງ: ຫົວໜ້າກອງຄຸ້ມຄອງພາສີ I-VII, ຫົວໜ້າດ່ານພາສີສາກົນ ແລະ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ຜູ້ບໍລິການແຈ້ງພາສີ ທີ່ເຄື່ອນໄຫວກ່ຽວກັບການນໍາເຂົ້າ-ສົ່ງອອກ, ການຜ່ານແດນ, ການເຄື່ອນຍ້າຍ ທີ່ນໍາໃຊ້ລະບົບອາຊີກູດາ ໃນຂອບເຂດທົ່ວປະເທດ.

ເລື່ອງ: ແຈ້ງການປິດລະບົບ ອາຊີກູດາ ເພື່ອປັບປຸງແກ້ໄຂລະບົບປະຕິບັດການຖານຂໍ້ມູນ (DATA CENTER), ນັບແຕ່ເວລາ 23:00 ໂມງ ຂອງວັນທີ 11 ມິຖຸນາ 2021 ຫາ ເວລາ 06:00 ໂມງ ຂອງວັນທີ 14 ມິຖຸ ນາ 2021.

- ອີງຕາມ ກົດໝາຍວ່າດ້ວຍພາສີ, ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ, ສະບັບເລກທີ 2059/ກງ, ລົງວັນທີ 29 ເມສາ 2021, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ;
- ອີງຕາມ ຄໍາເຫັນດີເປັນເອກະພາບ ຂອງຄະນະນໍາກົມພາສີ ຄັ້ງວັນທີ 08 ມິຖຸນາ 2021.

ເພື່ອຮັບປະກັນ ໃນການນໍາໃຊ້ລະບົບການແຈ້ງພາສີເປັນລາຍລະອຽດ ອາຊີກູດາ ໃນການຄຸ້ມຄອງການຈັດເກັບລາຍຮັບຄ່າພາສີ-ອາກອນ ແລະ ຄ່າພັນທະອື່ນ ເຂົ້າງົບປະມານແຫ່ງຊາດ, ກົມພາສີຈະໄດ້ມີການປັບປຸງ, ແກ້ໄຂ, ອັບເດດລະລະບົບຖານຂໍ້ມູນ (DATA CENTER) ໃຫ້ມີຄວາມຮັບປະກັນ, ສະດວກວ່ອງໄວ ແລະ ມີປະສິດທິພາບສູງ.

### ຫົວໜ້າກົມພາສີ ອອກແຈ້ງການ ຄື:

1. ນັບແຕ່ເວລາ 23:00 ໂມງ ຂອງວັນທີ 11 ມິຖຸນາ 2021 ຫາ ເວລາ 06:00 ໂມງ ຂອງວັນທີ 14 ມິຖຸ ນາ 2021 ກົມພາສີ ຈະໄດ້ດໍາເນີນການປັບປຸງແກ້ໄຂລະບົບປະຕິບັດການຖານຂໍ້ມູນ ( DATA CENTER ) ຂອງລະບົບອາຊີກູດາ, ກອງຄຸ້ມຄອງພາສີ I-VII, ດ່ານພາສີສາກົນ ໃນຂອບເຂດທົ່ວປະເທດ ຈະບໍ່ສາມາດນໍາໃຊ້ລະບົບໄດ້;
2. ໃນຊ່ວງເວລາດໍາເນີນການປັບປຸງແກ້ໄຂລະບົບ ມອບໃຫ້ຫົວໜ້າກອງຄຸ້ມຄອງພາສີ I-VII, ຫົວໜ້າດ່ານພາສີສາກົນ ເອົາໃຈໃສ່ຊີ້ນໍາໜ່ວຍງານຄຸ້ມຄອງການແຈ້ງພາສີ, ໜ່ວຍງານກວດກາສິນຄ້າ ແນະນໍາໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ຜູ້ບໍລິການແຈ້ງພາສີ ທີ່ມີຈຸດປະສົງນໍາສິນຄ້າເຂົ້າ-ອອກຜ່ານດ່ານພາສີຊາຍແດນ ໃຫ້ດໍາເນີນການແຈ້ງພາສີເປັນລາຍລະອຽດລ່ວງໜ້າ ຫຼື ພ້ອມພິມໃບແຈ້ງພາສີ ເພື່ອເປັນເອກະສານຢັ້ງຢືນໃນການກວດກາສິນຄ້າຕົວຈິງ, ພາຍຫຼັງລະບົບສາມາດນໍາໃຊ້ໄດ້ປົກກະຕິ ໃຫ້ດໍາເນີນຂັ້ນຕອນໃນລະບົບອາຊີກູດາໃຫ້ສໍາເລັດ;
3. ໃນຊ່ວງເວລາດໍາເນີນການປັບປຸງແກ້ໄຂລະບົບ, ອະນຸຍາດໃຫ້ຄໍ້າປະກັນດ້ວຍເງິນສົດ, ບັດຊໍາລະຄ່າພາສີ-ອາກອນ Smart Tax ສະເພາະສິນຄ້າເຄື່ອງຂອງ, ປະເພດບູດເນົ່າ ຫຼື ເຊື່ອມຄຸນນະພາບໄວ, ສິນຄ້າກະສິກໍາ, ສັດມີຊີວິດ, ສິນຄ້ານໍາໃຊ້ເປັນກໍລະນີສຸກເສີນ, ສິນຄ້າຮັບໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຄື່ອງຂອງນັກການທູດ ແລະ ບຸກຄົນທີ່ໄດ້ຮັບສິດທິພິເສດເທົ່ານັ້ນ ພາຍຫຼັງລະບົບສາມາດນໍາໃຊ້ໄດ້ປົກກະຕິ ໃຫ້ດໍາເນີນຂັ້ນຕອນການແຈ້ງພາສີໃນລະບົບອາຊີກູດາໃຫ້ສໍາເລັດ;
4. ແຈ້ງການສະບັບນີ້, ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມພາສີ

ກະຊວງ ການເງິນ

ກົມພາສີ